ອົງການໄອຍະການ ປະຊາຊົນ ສູງສຸດ
ຂາເຂົ້າ
ເລກທີ..133../ອອປສ
ວັນທີ..1../..6../..09..

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

**ສະພາແຫ່ງຊາດ**
ຄະນະປະຈຳ

ເລກທີ 113 / ຄປຈ
ນະຄອນຫຼວງວຽງຈັນ, ວັນທີ 28 ພຶດສະພາ 2009

# ມະຕິຕົກລົງ

## ຂອງຄະນະປະຈຳສະພາແຫ່ງຊາດ

## ວ່າດ້ວຍການປັບປຸງລະບົບສານປະຊາຊົນ ແລະ ອົງການໄອຍະການປະຊາຊົນ

---

ອີງຕາມ ມະຕິຕົກລົງ ເລກທີ 118 / ກມສພ, ລົງວັນທີ 15 ທັນວາ 2003 ຂອງກົມການເມືອງສູນກາງພັກ ວ່າດ້ວຍການສືບຕໍ່ ປັບປຸງບູລະນະກົງຈັກການຈັດຕັ້ງຂອງອົງການບໍລິຫານລັດ;

ອີງຕາມຄຳສັ່ງ ເລກທີ 39 /ນຍ, ລົງວັນທີ 26 ພະຈິກ 2007 ແລະ ເລກທີ 05 / ນຍ, ລົງວັນທີ 9 ມີນາ 2009 ຂອງນາຍົກລັດຖະມົນຕີ ກ່ຽວກັບການສືບຕໍ່ປັບປຸງອົງການບໍລິຫານລັດຂັ້ນເມືອງ;

ອີງຕາມມະຕິຕົກລົງ ເລກທີ 55 / ຄປຈ.ສພຊ, ລົງວັນທີ 20 ມີນາ 2009 ຂອງຄະນະປະຈຳສະພາແຫ່ງຊາດ ວ່າດ້ວຍການປັບປຸງມາດຕາຂອງກົດໝາຍ ກ່ຽວກັບຫ້ອງການຂອງຂະແໜງການຕ່າງໆຢູ່ຂັ້ນເມືອງ;

ອີງຕາມການສະເໜີຂອງສານປະຊາຊົນສູງສຸດ ແລະອົງການໄອຍະການປະຊາຊົນສູງສຸດ;

ອີງຕາມການຕົກລົງເຫັນດີຂອງກອງປະຊຸມຄະນະປະຈຳສະພາແຫ່ງຊາດ ປະຈຳເດືອນ ເມສາ ( 4 ) 2009.

**ຄະນະປະຈຳສະພາແຫ່ງຊາດ ຕົກລົງ :**

**ມາດຕາ 1 :** ໃຫ້ເຕົ້າໂຮມສານປະຊາຊົນເມືອງ ແລະອົງການໄອຍະການປະຊາຊົນເມືອງທີ່ມີໃນປັດຈຸບັນເຂົ້າມາເປັນສານປະຊາຊົນເຂດ ແລະ ອົງການໄອຍະການປະຊາຊົນເຂດ;

- ເຂດໃດ ທີ່ມີການຂະຫຍາຍຕົວທາງດ້ານເສດຖະກິດ-ສັງຄົມ ກໍສາມາດສ້າງຕັ້ງສານປະຊາຊົນເຂດ ແລະອົງການໄອຍະການປະຊາຊົນເຂດຂຶ້ນຕື່ມອີກກໍໄດ້ ຕາມຄວາມຮຽກຮ້ອງຕ້ອງການຕົວຈິງ.
- ສຳລັບອົງການໄອຍະການປະຊາຊົນເຂດ ຈະຕ້ອງແຕ່ງຕັ້ງພະນັກງານຂອງຕົນ 1-2 ຄົນໄປປະຈຳຢູ່ແຕ່ລະເມືອງ.

**ມາດຕາ 2 :** ໃຫ້ສານປະຊາຊົນເຂດ ມີສິດອຳນາດ ໃນການພິຈາລະນາຕັດສິນຄະດີເປັນຂັ້ນຕົ້ນຄື : ຄະດີແພ່ງ ທີ່ມີມູນຄ່າ 300.000.000 ກີບ ( ສາມຮ້ອຍລ້ານກີບ ) ລົງມາ ແລະ ຄະດີອາຍາທີ່ມີໂທດທາງອາຍາ ບໍ່ເກີນ 3 ປີ;

**ມາດຕາ 3 :** ໃຫ້ສານປະຊາຊົນສູງສຸດ ແລະ ອົງການໄອຍະການປະຊາຊົນສູງສຸດ ປັບປຸງງົບປະມານໃຫ້ຂຶ້ນຕາມສາຍຕັ້ງຂອງຕົນ;

**ມາດຕາ 4 :** ມອບໃຫ້ ສານປະຊາຊົນສູງສຸດ ແລະອົງການໄອຍະການປະຊາຊົນສູງສຸດ ຄົ້ນຄວ້າເພື່ອສະເໜີປັບປຸງ ບັນດາກົດໝາຍທີ່ກ່ຽວພັນກັບການປ່ຽນແປງດັ່ງກ່າວ;

**ມາດຕາ 5 :** ມອບໃຫ້ ສານປະຊາຊົນສູງສຸດ ແລະອົງການໄອຍະການປະຊາຊົນສູງສຸດຄົ້ນຄວ້າ ແລະປະສານສົມທົບກັບພາກສ່ວນກ່ຽວຂ້ອງ ເພື່ອຈັດຕັ້ງປະຕິບັດຕົວຈິງ ແລະຖືກຕ້ອງຕາມລະບຽບກົດໝາຍ;

**ມາດຕາ 6 :** ບັນດາການຈັດຕັ້ງຂອງພັກ-ລັດ, ອົງການຈັດຕັ້ງມະຫາຊົນ ແລະທຸກພາກສ່ວນທີ່ກ່ຽວຂ້ອງຈົ່ງຮັບຮູ້ ແລະພ້ອມກັນຈັດຕັ້ງປະຕິບັດມະຕິຕົກລົງສະບັບນີ້ຢ່າງເຂັ້ມງວດ.

**ມາດຕາ 7 :** ມະຕິຕົກລົງ ສະບັບນີ້ ມີຜົນສັກສິດໃຊ້ໄດ້ ນັບແຕ່ມື້ລົງລາຍເຊັນ ເປັນຕົ້ນໄປ.

**ປະທານຄະນະປະຈຳສະພາແຫ່ງຊາດ**

ປະທານ

ປານີ ຢາທໍ່ຕູ້